## **ຫຼັກສູດສຳຫຼັບຜູ້ເຂົ້າມາໃໝ່**

ລາຍລະອຽດຫຼັກສູດ: ຫຼັກສູດສຳຫຼັບຜູ້ເຂົ້າມາໃໝ່ ແມ່ນຫຼັກສູດໄລຍະສັ້ນທີ່ສອນພາສາອັງກິດ ແລະ ສອດຄ່ອງກັບການຮຽນໃນໂຮງຮຽນ ສະຫະລັດ ພ້ອມທັງວິຊາຕ່າງໆໃນໂຮງຮຽນ. ຫຼັກສູດສຳຫຼັບຜູ້ເຂົ້າມາໃໝ່ ແມ່ນສຳຫຼັບນັກຮຽນທີ່ຫາກໍ່ຍ້າຍເຂົ້າມາຢູ່ສະຫະລັດ ທີ່ມີຄວາມສາມາດໃນການໃຊ້ພາສາອັງກິດຢ່າງຈຳກັດ ແລະ ການຮຽນໃນປະເທດຂອງເຂົາເຈົ້າເອງກໍ່ຈຳກັດ. ນັກຮຽນຈະໄດ້ເຂົ້າຫ້ອງພິເສດທີ່ແຍກອອກມາຈາກນັກຮຽນທີ່ພາສາອັງກິດແມ່ນພາສາຂອງໂຕເອງໃນໄລຍະເວລາທີ່ຈຳກັດ .

**ເປົ້າໝາຍຂອງການສອນ**: ເພື່ອພັດທະນາການໃຊ້ພາສາອັງກິດ ແລະ ທັກສະທາງວິຊາການເພື່ອກຽມໃຫ້ນັກຮຽນສາມາດປະສົບຜົນສຳເລັດໃນໂຮງຮຽນທີ່ສະຫະລັດໄດ້.

**ສ່ວນປະກອບຂອງຫຼັກສູດ :** ລູກຊາຍ/ ລູກສາວຂອງເຈົ້າຈະໄດ້ຮັບການສອນໃນຫົວຂໍ້ທີ່ໝາຍໄວ້ຂ້າງລຸ່ມນີ້:

| | | | |
|---|---|---|---|
| ______ | ອ່ານ ແລະ ຂຽນເປັນພາສາອັງກິດ | ______ | ປະຫວັດສາດອາເມຣິກາເປັນພາສາອັງກິດ |
| ______ | ອ່ານແລະຂຽນເປັນພາສາຂອງໂຕເອງ | ______ | ປະຫວັດສາດອາເມຣິກາເປັນພາສາຂອງໂຕເອງ |
| ______ | ການສອນພິເສດເປັນພາສາອັງກິດ (ESL) | ______ | ການສອນທົ່ວໄປເປັນພາສາອັງກິດ |
| ______ | ການສອນເລກເປັນພາສາອັງກິດ | ______ | ການສອນທົ່ວໄປເປັນພາສາຂອງໂຕເອງ |
| ______ | ການສອນເລກເປັນພາສາຂອງໂຕເອງ | ______ | ສຸຂະສຶກສາເປັນພາສາອັງກິດ |
| ______ | ວິທະຍາສາດເປັນພາສາອັງກິດ | ______ | ສຸຂະສຶກສາເປັນພາສາໂຕເອງ |
| ______ | ສັງຄົມສຶກສາເປັນພາສາອັງກິດ | ______ | ກິດຈາລະຈອນເປັນພາສາອັງກິດ |
| ______ | ສັງຄົມສຶກສາເປັນພາສາຂອງໂຕເອງ | ______ | ກິດຈາລະຈອນເປັນພາສາຂອງໂຕເອງ |
| ______ | ປະຫວັດສາດ ແລະ ວັດທະນະທຳຂອງປະເທດເຈົ້າ ແລະ ປະເທດ ສະຫະລັດ | | |

**ຂັ້ນຕອນທີ່ມີ (ຂໍ້ມູນກ່ຽວກັບພາກສ່ວນນີ້ແຕກຕ່າງກັນໃນແຕ່ລະເມືອງ.)**
ນັກຮຽນຈະຢູ່ໃນຫຼັກສູດສຳຫຼັບຜູ້ເຂົ້າມາໃໝ່ບໍ່ກາຍ _____ເດືອນ. ນັກຮຽນເກືອບທັງໝົດຈະເຂົ້າຮຽນໃນຫລັກສູດສຳ ຫັລບຜູ້ມາໃໝ່ກ່ອນສາມາດໃຊ້ພາສາອັງກິດໄດ້ຢ່າງມີປະສິດທິພາບ. ພວກເຂົາຈະຖືກຍ້າຍໄປຫຼັກສູດອື່ນເພື່ອສືບຕໍ່ຮຽນພາສາອັງກິດແລະວິຊາອື່ນທີ່ຮຽນໃນໂຮງຮຽນ . ເມືອງຂອງເຮົາຄາດຫວັງວ່າອັດຕາສ່ວນໃນການຍ້າຍໄປຢູ່ຫຼັກສູດກະແສຫຼັກແມ່ນ ______ % ໃນແຕ່ລະປີ.

ຄວາມຄາດຫວັງອັດຕາສ່ວນການຈົບໂຮງຮຽນມັດທະຍົມປາຍສຳຫຼັບຫັລກສູດນີ້ແມ່ນ ______ .

**ການບໍລິການການສຶກສາພິເສດ**
ສຳຫຼັບນັກຮຽນທີ່ພິການຕ້ອງການບໍລິການພິເສດ, ການສອນພາສາແມ່ນໃຫ້ໄດ້ຕາມວັດຖຸປະສົງຂອງຫຼັກສູດ ການສຶກສາສ່ວນບຸກຄົນຂອງນັກຮຽນ (IEP).

**ຫຼັກສູດອື່ນທີ່ທາງໂຮງຮຽນມີ**

- ການສອນປົກກະຕິສຳຫຼັບຜູ້ທີ່ໃຊ້ພາສາອັງກິດໄດ້ຢ່າງຄ່ອງແຄ້ວ. ການສອນຈະໃຊ້ພາສາອັງກິດຕະຫລອດເວລາ. ຈະບໍ່ມີການໃຊ້ພາສາຂອງໂຕເອງ. ບໍ່ມີການສອນພາສາອັງກິດສຳຫຼັບຜູ້ໃຊ້ພາສາອັງກິດເປັນພາສາທີ່ສອງ. ເປົ້າໝາຍຂອງການສອນແມ່ນເພື່ອໃຫ້ໄດ້ເກຣດດີຕາມມາດຕະຖານຂອງການເຮັດໃຫ້ເກຣດດີຂຶ້ນ ແລະ ການຈົບການສຶກສາ.
- ຂໍ້ມູນກ່ຽວກັບຫຼັກສູດທີ່ທາງໂຮງຮຽນມີອາດຕິດຂັດມາພ້ອມ.